# ບົວແດງ



ບົດລະຄອນອິງປະຫວັດສາດ ຂອງ

## ດວງຈຳປາ

ບົດລະຄອນເວທີ ເລື່ອງ

# ບິອນແດງ



ດວງຈຳປາ

ບົດລະຄອນເວທີ

# ບົວແດງ


ໂດຍ: ດວງຈໍາປາ

ຮູບປະກອບ: ແສງສຸລິ ກັດຕິຍະສັກ

ບັນນາທິການ: ດວງເດືອນ ບຸນຍາວົງ

ອອກແບບຈັດໜ້າ: ສາຍຝົນ ອິນທະລັງສິດ, ສຸກພັນສາ ພູຜາສຸກ

ພິສູດອັກສອນ ດາລາ ກັນລະຍາ, ສຸກພັນສາ ພູຜາສຸກ



ຈັດພິມ ແລະ ຈໍາໜ່າຍ:

ສໍານັກພິມດອກເກດ

ຖະໜົນຮ່ອງແກ-ໂພນທັນ ບ້ານໂພນທັນ,

ເມືອງໄຊເຊດຖາ

ນະຄອນຫຼວງວຽງຈັນ, ສ.ປ.ປ. ລາວ

ດອກເກດ DokkeD ໂທລະສັບ: 020 5561 2940

DATA COM MÖBELA

ອຸປະຖໍາໂດຍ:

ທ່ານ ດາຣາວົງ ກັນລະຍາ

ແລະ ທ່ານ ພົງປະເສີດ ກັນລະຍາ

ທະບຽນອະນຸຍາດ ເລກທີ: 163ພຈ26022014

ພິມຄັ້ງທີ 1, ວຽງຈັນ ສ.ປ.ປ ລາວ, ມີນາ 2014

ຈໍານວນ: 2000 ຫົວ

ພິມທີ່: ໂຮງພິມ ລາວ ຢູນິ ປຣິ້ນ



ສະຫງວນລິຂະສິດ © ດາຣາ ກັນລະຍາ, ແສງສຸລິ ກັດຕິຍະສັກ, 2014

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ

ດວງຈຳປາ

ບົວແດງ/ດວງຈຳປາ, ພາບປະກອບ ແສງສຸລິ ກັດຕິຍະສັກ. --ວຽງຈັນ: ສຳນັກພິມ ດອກເກດ, 2014.

127 ໜ້າ: ພາບປະກອບສີ; 21 ຊມ.

1. ບົດລະຄອນ. I. ແສງສຸລິ ກັດຕິຍະສັກ, ຜູ້ແຕ້ມ. II. ຊື່ເລື່ອງ

808.82--dc21

ISBN 978-9932-07-036-7

ເລກທະບຽນພິມຈຳໜ່າຍ: 163 /ພຈ26022014

ເນື້ອໃນ ແລະ ຮູບທຸກບົດ / ຕອນ ໃນປຶ້ມຫົວນີ້ ແມ່ນສະຫງວນລິຂະສິດ ໂດຍ ດາລາ ກັນລະຍາ ແລະ ແສງສຸລິ ກັດຕິຍະສັກ. ຫ້າມນຳເອົາໄປພິມເຜີຍແຜ່ ບໍ່ວ່າໃນປຶ້ມ-ສິ່ງພິມ ວາລະສານ ຫຼື ທາງເອເລັກໂຕຼນິກ ເພາະບົດປະພັນ ແລະ ຮູບແຕ້ມແມ່ນການປະດິດສ້າງ ຂອງນັກປະພັນ ແລະ ສິລະປິນ ສະນັ້ນ ຖ້າທ່ານຜູ້ໃດ ຢາກນຳໄປເຜີຍແຜ່ເພື່ອການສຶກສາ ກະລຸນາ ຕິດຕໍ່ ຂໍອະນຸຍາດ ນຳເຈົ້າຂອງລິຂະສິດດ້ວຍ. ຂໍຂອບໃຈ.

# ຄຳສະເໜີ

ດວງຈຳປາ ໃຊ້ເວລາຫຼາຍທົດສະວັດ (ແຕ່ 1985 - 2013) ເພື່ອພັດທະນາບົດລະຄອນເລື່ອງ "ຫອມກິ່ນບົວແດງ" ເຊິ່ງໄດ້ເຄີຍຂຶ້ນສະແດງມາແລ້ວ ໃນປີ 1985 ແລະຖືກນຳໄປດັດແປງເປັນຮູບເງົາ ທີ່ປະສົບຜົນສຳເລັດເປັນຕຳນານໜຶ່ງໃນວົງການບັນເທີງລາວ.

ດ້ວຍຄວາມຜູກພັນຫວງແຫນບົດປະພັນຂອງຕົນ ດວງຈຳປາ ບໍ່ຍອມຢຸດຢູ່ກັບຄວາມສຳເລັດເບື້ອງຕົ້ນ ດ້ວຍວ່າຕົວລະຄອນໃນ ຫອມກິ່ນບົວແດງ ຖືກປັ້ນຫຼໍ່ອອກຈາກຊີວິດແທ້ຂອງນັກເຄື່ອນໄຫວນັກຂົນຂວາຍທັງໄວໜຸ່ມ-ໄວສູງ ທີ່ເປັນປະຊາຊົນໃນເຂດຍາດແຍ່ງ ເຊິ່ງຈຳນວນໜຶ່ງກໍໄດ້ອຸທິດຊີວິດ ປະກອບສ່ວນໃນການຕໍ່ສູ້ຍາດເອົາເອກະລາດຂອງຊາດ ຈຳເປັນຢູ່ແລ້ວທີ່ພວກເພິ່ນຕ້ອງໄດ້ຢູ່ໃນຄວາມຊົງຈຳຂອງຄົນຮຸ່ນຕໍ່ໆໄປ.

ວິທີການໜຶ່ງ ທີ່ຈະໃຫ້ວິລະກຳຂອງຜູ້ຄົນເຫຼົ່ານີ້ເປັນທີ່ລະນຶກເຖິງ ມີຊີວິດຊີວາ ໜ້າເຊີດຊູ ກໍແມ່ນການຖ່າຍທອດອອກເປັນບົດເລື່ອງວັນນະຄະດີ ເລື່ອງສັ້ນ ເລື່ອງຍາວ ກະວີ ກອນລຳ ແລະ ບົດເພງ... ຈາກປາຍປາກກາທີ່ຝົນແລ້ວຝົນອີກ ຂອງບັນດານັກປະພັນ. ນັກຂຽນ

ນາມ ດວງຈຳປາ ສະສົມປະສົບການ ຈາກການເປັນນັກເຄື່ອນໄຫວ ວັດທະນະທຳ ຢູ່ຫຼາຍປີ ແລະເປັນຜູ້ຊ່າງເກັບກ່ຽວ ເລືອກເຟັ້ນເອົາ ມູນເຊື້ອອັນດີງາມ ມາຂະຫຍາຍ ສືບສົບ ສ້າງສັນ ໃຫ້ເກີດສິ່ງບັນເທີງ ຫຼໍ່ລ້ຽງຈິດວິນຍານ ໃຫ້ລູກຫຼານ ໄດ້ລະນຶກເຖິງຜົນງານການຕໍ່ສູ້ກູ້ຊາດ ຂອງວິລະຊົນນິລະນາມທັງຫຼາຍ ຢ່າງບໍ່ສຸດສ້ຽງເປັນ.

ສຳນັກພິມດອກເກດ ມີຄວາມພາກພູມໃຈຢ່າງຍິ່ງ ທີ່ໄດ້ເປັນຜູ້ຈັດພິມບົດລະຄອນເວທີ "ບົວແດງ" ເລື່ອງນີ້ ອອກມາສູ່ບັນນະພິບລາວ ສ້າງສີສັນໃຫ້ອຸທິຍານອັກສອນລາວອຸດົມສົມບູນຂຶ້ນຕື່ມ. ຫວັງຢ່າງຍິ່ງວ່າ ຕົວລະຄອນແຫ່ງປະຫວັດສາດເຫຼົ່ານີ້ ຈະມີຊີວິດຊີວາ ຍືນຍົງຢູ່ໃນຄວາມຊົງຈຳຂອງທ່ານຜູ້ອ່ານ ແລະຖ່າຍທອດເຫດການປະຫວັດສາດ ແລະວິລະກຳ ການຕໍ່ສູ້ກູ້ຊາດ ໃຫ້ເປັນບົດຮຽນແກ່ເຍົາວະຊົນ ຄົນຮຸ່ນຫຼັງສືບໄປ.

ສຳນັກພິມດອກເກດ

ເດືອນກຸມພາ 2014



# ສາກ I

*(ຢູ່ເຮືອນບົວແດງ ມີຂັ້ນໄດ ໄຫນ້ຳກິນຢູ່ດ້ານໜ້າ. ຢູ່ກ້ອງລ່າງມີກີ່ຕ່ຳຫູກ ບົວແດງນັ່ງຕ່ຳຫູກຢູ່ມິດໆ. ສຽງໄກ່ກະຕ໊າກ ແລະ ຂັນ. ເດັກນ້ອຍຫຼາຍຄົນແລ່ນຫຼິ້ນໝາກລີ້ກັນ. ສຽງດັງມາຈາກຫຼັງສາກ ແລ້ວເດັກນ້ອຍໄລ່ກັນອອກມາໃນສາກ. ຖຽງກັນຟົດແຊວ.)*

## ອົງໜຶ່ງ.

*ແມ່ບົວແດງ :* *(ຢູ່ເທິງເຮືອນ ປ່ອນໜ້າອອກມາ ທາງປ່ອງຢ້ຽມ)* ອ້າວ ເດັກນ້ອຍນີ້ ! ສູຄືມາແຊວແທ້ ! ໄປຫຼິ້ນບ່ອນອື່ນໄປ໊ ! ປັດໂທ້ ສູນີ້ເນາະ. *(ພວກເດັກນ້ອຍທະຍອຍພ່າຍໄປ - ມິດໄປ)* ແດງເອີ້ຍ ຄ້າງຫວດເຂົ້າແລ້ວເບາະ? ຈັກໜ້ອຍມັນຊິຄ່ຳໃດ໋ !

*ບົວແດງ :* *(ພໍພືນສິ້ນຢູ່ກີ່ ແລໃສ່ກັບແພຂິດໄໝຄຳ ແຍງໄປມາດ້ວຍຄວາມສຸກໃຈ)* ເອີ ເຮົາຊິໄປດຽວນີ້ແມ່. *(ຄຳຫວານທາບຄຸອອກມາຈາກທາງຂວາ ຂອງເວທີ ເຫັນບົວແດງເພີນນຳສິ້ນຢູ່ ຈຶ່ງປົງທາບຄຸມິດໆ ແລ້ວຍ່າງເຂົ້າມາທາງຫຼັງເອົາມືອັດຕາບົວແດງ ທັງຈວາດ)*

*ບົວແດງ :* ໂອ້ຍ ຮູ້ແລ້ວແຫຼະ ນາງເອີ້ຍ ໄລແມ່ນບໍ່ຫັ້ນ?

*ຄຳຫວານ :* ຈ້າງກະບໍ່ແມ່ນ.

*ບົວແດງ :* ອຸ໊ຍ ສູ ! ແມ່ນຫວານຫວະ ຊັ້ນບ່າ?

*ຄຳຫວານ :* ຝັນໄປຮອດໃສ ຫຍັງມາເພີນແທ້.

*ບົວແດງ :* ເອີນີ້ນ່າຫວານ ເຮົາວ່າຕັດເສື້ອສີໄຂ່ໃສ່ກັບສິ້ນຂຽວ ແພຂຽວນີ້ມັນຊິເຂົ້າກັນບໍ່?

*ຄຳຫວານ :* ອຸ້ຍ ກາຍວ່າເຂົ້າກັນ ງາມແລ້ວແຫຼະ ໝູ່ນຸ່ງສີນີ້ນະ.

*ບົວແດງ :* ເຮົານັດສາວໄລໄວ້... ຄັນຊັ້ນໂຕຊິໄປໃສນ່າ?

*ຄຳຫວານ :* ເຮົາວ່າຊິໄປຕັກນ້ຳສ້າງດີງ ໄປນຳກັນບໍ່?

*ບົວແດງ :* ຖ້າບຶດດຽວເດີ ຄ້າງໝໍ້ໜຶ້ງເຂົ້າກ່ອນ. *(ບົວແດງແລ່ນຂຶ້ນເທິງເຮືອນ ມິດໄປ ຄຳຫວານເອົາແພມາພາດເອິກ ເຮັດຕີບ່ຽງ ແລ້ວແກວ່ງຄີງໄປມາ)*

*ຄຳຫວານ :* ອ້າຍັໝັ້ນ ງາມບໍ່ ສີມືນ້ອງຕໍ່າເອງໃດ໋ ນ້ອງຫ້າງປານນີ້ ມື້ໃດອ້າຍຊິມາຂໍນໍ້? ວ່າຈັ່ງໃດ໋ລະສຸດທີ່ຮັກ !

*ບົວແດງ :* ອຸ໋ຍ ສາວນີ້ ຈັກເວົ້າຫຍັງເປັນຕາອາຍແທ້ ! ເຊົາ ! ເຊົາ ! *(ບົວແດງ ກຸມຍາດເອົາແພຖືໄປມ້ຽນໄວ້ກີ່ຄືນປ້າພອນມາຮອດ ອອກຈາກທາງຂວາຂອງເວທີ ຫີ້ວກະຕ່າຜັກມາໃຫ້ບົວແດງ ທັງເອີ້ນທ້ວງ)*

*ປ້າພອນ :* ອ້າວໆ ແມ່ນຫຍັງກັນ ຫຼານເອີຍ ໃຫຍ່ເປັນແສ້ເປັນສາວປານນີ້ ກໍຍັງຢອກກັນຄືເດັກນ້ອຍຢູ່ຫວະ? *(ສຽງຫົວ*

*ຢອກກັນຮ້ວາຍລົງ)* ເອີ ເອົາຜັກນີ້ໄວ້ໃສ່ພາເຂົ້າເດີ້ ແມ່ຫຼານບອກແຕ່ເຊົ້າພຸ້ນ ປ້າບໍ່ໄດ້ມາ ຄາໄປເກັບຜັກ ຫຼານກຽມຫຍັງແດ່ແລ້ວນີ້ນ່າ?

*ບົວແດງ :* ແມ່ປ້າ ອີ່ແມ່ວ່າບໍ່ກະກຽມຫຍັງໃດ໋ ກິນເຂົ້າແລງແລ້ວ ຄ່ອຍມາວ່າຊັ້ນເດ.

*ປ້າພອນ :* ຫະ ຕາຍ ໆ ແມ່ແດງນີ້ກະໂພດປານນັ້ນພຸ້ນຫວະ ຕັ້ງແຕ່ກີ້ກະຄືໃຈກວ້າງໃຈຂວາງຢູ່. ແຕ່ຄ່ານາເອົາຜົວໃໝ່ນີ້ ເລີຍຂີ້ຖີ່ຂີ້ຕົ່ງໄປນຳເຂົາໝົດຊັ້ນຫວະ ຫືື? ເອີ ຢ່າເທາະ ປ້າຊິໄປເບິ່ງໄກ່ຢູ່ລົກ ໂຕໜຶ່ງ, ສອງໂຕ... ກະຊິພໍແກ້ມ ຕິເບາະເນາະ ເຮັດລາບສາ ປ້າວ່ານະ ແລ້ວປ້າຊິມາເວົ້າ ນຳແມ່ຫຼານດອກ.

*ບົວແດງ :* ຫຼານຊິຂີ້ວເຂົ້າຖ້າເດີປ້າ.

*ປ້າພອນ :* ເອີ. *(ປ້າພອນ ຄືນເມືອ ອອກທາງຂວາຂອງເວທີ)*

*ຄຳຫວານ :* *(ຢິກແຂນບົວແດງຕໍ່ວ່າ)* ໂຕນີ້ກະໂພດ ຊິມີງານໃຫຍ່ກະຮອດບໍ່ບອກໝູ່ຄູ່ເລີຍ ໃຈດຳແທ້ໆ !

*ບົວແດງ :* ຊິບອກຈັ່ງໃດ໋ ເລື່ອງຂອງຜູ້ໃຫຍ່ເພິ່ນພຸ້ນ !

*ຄຳຫວານ :* ເອີ້ ແຕ່ວ່າແມ່ປ້າໂຕ ດີ໋ ດີ ເນາະ.

*ບົວແດງ :* ແມ່ປ້າເຮົາເພິ່ນຮັກເຮົາມາແຕ່ໃດ໋ ບໍ່ມີອີ່ພໍ່ແລ້ວ ເພິ່ນແຮ່ງ ອີຕົນເຮົາຕວ່າ.

*ຄຳຫວານ :* ເອີ້າ ຄຸໂຕຄືກິ່ງດຽວ?

*ບົວແດງ :* ຄຸຫວະ ເອື້ອຍທອງຍືມໄປ ພໍດີເຮົາໄປເອົາຢູ່ນ້ຳສ້າງເລີຍໄປໆເທາະ, ຟ້າວກັບຄືນມາຄິວໄກ່.

*ອີ່ນາງ :* *(ຫິ້ວຂ້ອງແລ່ນມາຫາບົວແດງ ອອກມາຈາກທາງດ້ານຊ້າຍ ຂອງເວທີ)* ເອື້ອຍແດງ ໆ !

*ບົວແດງ :* ອ້າວ ເອົາຫຍັງມາ ນາງ?

*ອີ່ນາງ :* ອີ່ພໍ່ ເພິ່ນລົງສະກາງນາ ເພິ່ນວ່າໃຫ້ເອື້ອຍເອົາປານີ້ເຮັດລາບມື້ແລງໜີ້ ຊິພໍບໍ່? ມີແຕ່ປາດຸກອຸຍໃດ໋.

*ຄຳຫວານ :* *(ຍາດເອົາຂ້ອງໄປສ່ອງເບິ່ງປາ)* ກາຍວ່າພໍ ເນາະແດງ ! ປາຕັ້ງວ່າເຄິ່ງຂ້ອງ. ເອີ ເຮົາວ່າເຮັດລາບປາດຸກ ແລ້ວໄກ່ແມ່ປ້າໂຕຫັ້ນ ເຮັດຕົ້ມສົ້ມດີບໍ່?

*ບົວແດງ :* ຂອບໃຈເດີນາງ. *(ນາງແລ່ນເມືອ ບົວແດງເອົາຂ້ອງປາປ່ອນຂຶ້ນເທິງເຮືອນ ຈັບເອົາໄມ້ຄານ ແລະຄຸ ຄອນໄປ ຄຳຫວານ ຫາບເອົາຄຸຂອງຕົນ ແລ້ວສອງສາວກໍອອກຍ່າງໄປສອງສາມກ້າວ)*

*ຄຳຫວານ :* ເອີແດງ ຊັ້ນພໍ່ນ້າໂຕເດ້ ໄປໃສ ຄືບໍ່ເຫັນ.

*ບົວແດງ :* ໄປວຽງ ໄດ້ສີ່ມື້ແລ້ວເດ້.

*ຄຳຫວານ :* ເວົ້າແລ້ວກະຖິ້ມນີ້ເນາະ ພໍ່ນ້າໂຕຫັ້ນ ຄືບໍ່ຢາກໄດ້ອ້າຍໝັ້ນເປັນເຂີຍປານໃດ ແມ່ນບໍ່ ຕິລາວບ່ອນໃດຫວະ

ອ້າຍໝັ້ນ ພໍ່ແມ່ກະເປັນຄົນຈົບຄົນດີ ຫຼື ວ່າເພິ່ນບໍ່ມັກຜູ້ນີ້ ເພິ່ນຊິມີຜູ້ອື່ນໃຫ້ໃດ໋ຫັ້ນເນາະ?

*ບົວແດງ :* ເອີ ກະມີຢູ່ ແຕ່ວ່າເຮົາຜັດຢາກໄດ້ລາວເປັນພໍ່ສ່ຽວຫຼາຍກວ່ານ່າ.

*ຄຳຫວານ :* ໃຜ !

(ບົວແດງ ເຮັດທ່າທາງລຽນແບບໃຜຜູ້ໜຶ່ງ ທີ່ຄຳຫວານຮູ້ຈັກ)

*ຄຳຫວານ:* ໂອຍ ລາວບໍ່ມັກເຮົາດອກ.

*ບົວແດງ :* ມື້ຄືນນັ້ນເດ ຢູ່ຂວ່າງຫັ້ນ ລາວນັ່ງໃກ້ໃຜ?

*ຄຳຫວານ :* ສິບຜູ້ນັ່ງໃກ້ ຊາວຜູ້ນັ່ງໃກ້ ກໍບໍ່ທໍ່ໂຕຜູ້ນັ່ງໄກດອກນາ.

*ບົວແດງ :* ເຮົາເວົ້າແທ້ໃດຫວານ ອ້າຍຊຽງນີ້ ລາວເປັນຄົນດີໃດ໋ ແຕ່ວ່າເຮົາກະມີອ້າຍໝັ້ນແລ້ວ ແມ່ຊິເວົ້າ ແນວໃດ ກໍຢ່າລະເນາະ.

*ຄຳຫວານ :* ປຸກເຮືອນ ຕາມໃຈຜູ້ຢູ່ ຜູກອູ່ກໍຕາມໃຈຜູ້ຜູກແມ່ນບໍ່?

*ບົວແດງ :* ອ້າວ ຕາມໃຈຜູ້ນອນລະບໍ ໄປ ໆ ໆ...

*(ທັງສອງອອກໄປທາງຂວາ)*

# ສາກ I
## ອິງສອງ

*(ສຽງຄົນໄຫ້ ທະຫານ 4-5 ຄົນ ຄຸມຕົວຊາວບ້ານ ພ້ອມທັງພໍ່ບ້ານ-ພໍ່ຄຳໝັ້ນ. ອີ່ນາງແລ່ນນຳທັງໄຫ້)*

*ອີ່ນາງ :* ໂອ້ຍ ຢ່າເອົາພໍ່ຂະນ້ອຍໄປ !

*ທະຫານ1 :* *(ໄລ່ອີ່ນາງໜີ ແລ້ວພາຜູ້ຖືກມັດສອກມາໜ້າເວທີ ຕໍ່ໜ້າເຊຽເຮືອນບົວແດງ)*

ຖອຍ....ໄປ.... !

*ທະຫານ2 :* *(ທ່າທາງ ຂົ່ມຂູ່ ຈັບປືນຈໍ້ໃສ່ ຜູ້ຖືກມັດ)*

ຮ່າ ໆ ໆ ບັກເຖົ້າ ? ຄັນບໍ່ຢາກເຈັບໂຕ ບອກມາສາ ລູກຊາຍມຶງຢູ່ໃສ? ບັກຄຳໝັ້ນມັນຢູ່ໃສ? ບອກມາ !

*ພໍ່ໝັ້ນ :* *(ເຮັດໜ້າເສີຍ ບໍ່ຮ້ອນຮົນ)* ກູບໍ່ຮູ້ !

*ທະຫານ2 :* ທະ ບໍ່ຮູ້ຊັ້ນຫວະ? ຖ້າມຶງບໍ່ຢາກຕາຍ ບອກມາສາ ດີໆ ບັກຄຳໝັ້ນຢູ່ໃສ?

*ພໍ່ໝັ້ນ :* ກູບໍ່ຮູ້ ! ມັນໃຫຍ່ແລ້ວ ມັນໄປຫາຢູ່ຫາກິນທາງໃດ ໃຜຊິຈັກ.

*ທະຫານ2 :* ຫາຢູ່ຫາກິນ ຊັ້ນຫວະ? *(ນາຍທະຫານຕົບຕີ ພໍ່ໝັ້ນ)*

*ແມ່ແດງ:* *(ສ່ອງປ່ອງຢ້ຽມ ຈອບເບິ່ງມິດໆ ຕັ້ງແຕ່ໄດ້ຍິນສຽງ ຈົນເທົ້າທະຫານກາຍເຮືອນໄປ)*

*ອີ່ນາງ :* *(ຊຶ່ງລີ້ຢູ່ດ້ານຫຼັງເຮືອນ ອອກມາເອີ້ນຂໍຄວາມຊ່ວຍເຫຼືອ ນຳໄທບ້ານ)*

ໂອຍ ອີ່ພໍ່ໆ... ຊ່ວຍພໍ່ຂ້ອຍແດ່ ຮື ໆ ໆ...

*ທະຫານ2 :* ຈ່າເພັງ ລາກມັນໄປແມ່.

*(ສຽງຮ້ອງເຫຼີ ຂອງເດັກນ້ອຍຜູ້ຍິງ ແລະໄທບ້ານ ຢູ່ແຈ ດ້ານຂວາ ອີ່ນາງ ແລ່ນອອກມາຫາພໍ່ໆເອົາມືລູບຫົວລູກ)*

*ພໍ່ໝັ້ນ :* ນາງ ໆ... ລູກບໍ່ຕ້ອງໄຫ້ນ່າ.

*ທະຫານ2 :* ມຶງ ຢ່າລໍ່າໄລ ບັກເຖົ້າ ! ບັກເພັງ ເອົາມັນໄປຂຶ້ນລົດ ໄປ ! ຄຸມມັນໄປ.

*ທະຫານ1 :* ໄປ ...

*ອີ່ນາງ :* *(ອີ່ນາງໄຫ້ຕິດຕາມໄປ)*

*ແມ່ແດງ :* *(ອອກມາໜ້າເຮືອນ ລົງມາສ່ອງນຳທາງ ຈົ່ມແບບໂມໂຫ ຢູ່ຄົນດຽວ)* ມັນແມ່ນເລື່ອງຫຍັງກັນນີ້ ? ນາຍບ້ານຖືກຈັບ ໄທ້ ໆ ໆ... ຄັກຫຼາຍເນາະ ກູຫາກວ່າແລ້ວນ່າ ມັນບໍ່ເຫັນ ຂຶ້ນເຫັນເກີນດອກ ໄທເຮືອນນີ້ ຂີ້ທຸກຍັງບໍ່ແລ້ວ ມາຖືກຈັບອີກ ເອີ ! ດີລະ ກູຊິມີອັນອ້າງແດ່.

ມຶງເດີ ! ອີ່ແດງ ! ມຶງບໍ່ຟັງຄວາມແມ່ ມຶງຊິຟັງຄວາມໃຜ ບາດນີ້ ອີ່ແດງເອີ້ຍ ! ອີ່ລູກບໍ່ມັກດີ.

*ບົວແດງ :* *(ຫາບນ້ຳມາຮອດຕີນຂັ້ນໄດ)* ແມ່ ແມ່ນສຽງ ເຂົາເຈົ້າ ໂສ້ເຫຼັກຫຍັງ ຢູ່ແຄມທາງ ຄືຈັ່ງເຫັນລົດໃຫຍ່ມາເບາະແມ່.

*ແມ່ແດງ :* ເອີ ມັນກະຂ່າວຈິບຂ່າວດີສຳລັບມຶງລະບໍ. ພຸ້ນ ! ໄປລະເດພໍ່ປູ່ໃນອະນາຄົດມຶງ !

*ບົວແດງ:* ໄປໃສ ?

*ແມ່ແດງ:* ເຂົາມັດສອກໄປລະເດ້.

*ບົວແດງ :* *(ຕົກໃຈແຮງ ແລ່ນໄປສ່ອງເບິ່ງ)* ມັດສອກໄປ ! ແມ່ ເຈົ້າໝາຍເຖິງໃຜ?

*ແມ່ແດງ :* ໝາຍເຖິງໃຜ ? ພວກເຊື້ອແນວທີ່ມຶງມັກມຶງພໍໃຈນັ້ນລະ ! *(ສຽງອີ່ນາງໄຫ້ຍ່າງເຂົ້າມາ)*

*ອີ່ນາງ :* ຮີ ໆ ໆ... ເອື້ອຍແດງ ຮີ ໆ... ເຂົາເຈົ້າຈັບອີ່ພໍ່ໄປແລ້ວ ເອື້ອຍແດງ ຮີ ໆ ຈັບໄທບ້ານບັກຫຼາຍໆຄົນ !

*ບົວແດງ :* ຕາຍແລ້ວ ! ຄືມາຈັບພໍ່ບ້ານ?

*ແມ່ບົວແດງ:* *(ຈອບຟັງຢູ່ທ່າງໆ)*

*ອີ່ນາງ :* ເຂົາວ່າອີ່ພໍ່ເປັນພວກແນວລາວ ເຂົາຊິເອົາອີ່ພໍ່ ກັບໄທບ້ານ ໄປຂັງຢູ່ຈີນາຍໂມ້ພຸ້ນນ່າ.

*ບົວແດງ :* ແລ້ວອ້າຍພັ້ນໄປໃສ ເປັນຫຍັງລາວບໍ່ຊ່ອຍພໍ່ລຸງແດ່?

*ອີ່ນາງ :* ອ້າຍພັ້ນບໍ່ຢູ່ ລາວໄປວຽກແຕ່ແລງວານນີ້ພຸ້ນ ຮື ໆ !

*(ໄທບ້ານ 3 ຄົນ ຍິງສອງຊາຍໜຶ່ງ ອອກມາສົມທົບ)*

*ໄທບ້ານ ຍິງ1 :* ຕ໊າຍ ໆ ເຂົາເຈົ້າຈັບໄທບ້ານເຮົາຕັ້ງ 7-8
ຄົນພຸ້ນໄດ໋ຫັ້ນ ຄຸ້ມບ້ານເໜືອນະເອົາໄປໝົດ !

*ໄທບ້ານ ຊາຍ2 :* ທະຫານ ເຂົາເວົ້າວ່າ ພວກສູເປັນໃຈແນວລາວ
ວ່າຊັ້ນເດ ພວກເຮົາຊິເຮັດຈັ່ງໃດບາດນີ້.

*ໄທບ້ານ ຍິງ1 :* ກະຍັງວ່ານີ້ແຫຼະ ບ້ານເມືອງຄືມາວຸ້ນວາຍແທ້ !

*ໄທບ້ານ ຍິງ3 :* ດູຕິນແຕ່ອ້າຍພັ້ນເນາະ ເປັນຈັ່ງຊີ້ແລ້ວ ເພິ່ນຊິຂໍກັນຢູ່ບໍ່
ແມ່ປ້າ ?

*ໄທບ້ານ ຍິງ1 :* ນາງ ແມ່ຢູ່ເຮືອນບໍ່ ດຽວນີ້ນະ?

*ອີ່ນາງ :* ເອີ ແມ່ຢູ່ເຮືອນ *(ສຽງສະອື້ນ)*

*ໄທບ້ານ ຍິງ1 :* ເອີ ແດງ ເລື່ອງມັນເປັນແນວນີ້ ແລ້ວຊິວ່າຈັ່ງໃດ໋ກັນ.
ຊິຂໍກະບໍ່ເປັນແລ້ວ ອິດຖ້າຟັງເບິ່ງກ່ອນ ນໍ້.
ນາງເມືອເທາະ, ໄປຫາແມ່ໂຕ.

*ບົວແດງ :* ເອີ ຖ້າແດ່ ຂ້ອຍຊິໄປນຳ !

*ແມ່ແດງ :* *(ອາລົມໂມໂຫຂຶ້ນ ແລ່ນໄປດຶງແຂນບົວແດງໄວ້)*

ຢຸດໃດ໋ ອີ່ແດງ ! ມຶງນັ່ງຢູ່ນີ້ ກູຊິເຈລະຈາກັບມຶງ

ເບິ່ງດູ. ມັນແມ່ນເຊື້ອແມ່ນແນວອິຫຍັງຂອງມຶງ ເກາະດຽວນີ້ຫະ ເຂົາເປັນຫຍັງກະເລື່ອງຂອງເຂົາຊັ້ນ ຕ໋ວ່າ. ນີ້ເດີ ກູຊິບອກໃຫ້ ນັບແຕ່ມື້ນີ້ເປັນຕົ້ນໄປ ມຶງຢ່າຊູ ໄປພົວພັນກັບໄທເຮືອນນັ້ນອີກ ! ດອງມຶງກັບບັກໝັ້ນ ກະໂມຄະ ເລີກລົ້ມ !

*ບົວແດງ :* ອີ່ແມ່ ! *(ບົວແດງໄຫ້ໂຮຂຶ້ນ)*

*ແມ່ແດງ :* ມຶງບໍ່ຕ້ອງເອົານ້ຳຕາມາສຳອອຍກູດອກ ເກີນກູບໍ່ມັກ ມາແຕ່ໃດ ອັນບັກໝັ້ນຫັ້ນ ! ມັນມີຫຍັງໄທເຮືອນນັ້ນ ? ນາກະທົ່ງນ້ອຍໆ ໄດ້ເຂົ້າເກືອບບໍ່ກຸ້ມປີ. ບາດຜູ້ເຂົາຈິບ ເຂົາດີຫັ້ນນ່າ ອັນໃດເຂົາກະຊິເຄນໃຫ້ ເຫັນບໍບາດນີ້ ຄົນຂີ້ຄຸກຂີ້ຕະລາງ ກູບໍ່ວ່າຊິເອົາມາເປັນດອງ ກູເດີ້ !

*ບົວແດງ :* ແມ່ ລຸງພໍ່ບ້ານ ເພິ່ນເປັນຄົນດີ ໃດ໋.

*ແມ່ແດງ :* ຮື້ ດີຊັ້ນຫວະ? ດີມັນຊິຖືກຈັບຊັ້ນບໍ? ສິມເຂົາສົງໄສ ເຂົາກໍຈິ່ງສົງໄສໃດ໋ເດີ້. ມັນຕັ້ງຊິແມ່ນຄວາມເຂົາວ່າ ຍາມໃດກະໄປທາງ ໄປທາງ ຈັກແມ່ນໄປໃສກັນແທ້.

*ບົວແດງ :* ບັດທີຜູ້ອື່ນກະໄປຄືກັນ ເຈົ້າຄືບໍ່ເຫັນເວົ້າ.

*ແມ່ແດງ :* ມຶງເວົ້າໃຫ້ໃຜ ?

*ບົວແດງ :* ກະເວົ້າໃຫ້ຜົວເຈົ້າຫັ້ນແຫຼະ ໄປເທື່ອໃດ ເປັນ 3-4 ມື້ ບໍ່ແມ່ນໄປຄືພໍ່ບ້ານຫັ້ນຫວະ.

*ແມ່ແດງ :* *(ຊີ້ໜ້າ ບົວແດງ ຢ່າງໂມໂຫແຮງ)*

ໂທ້ ! ໂທ້ ! ຜົວເຈົ້າ ! ມຶງຊິຢຳເກງເຂົາໜ້ອຍໜຶ່ງ
ບໍ່ມີແຫຼະ ຫື ! ຢ່າງໜ້ອຍເຂົາກະມີເງິນໃຫ້ກູໃຊ້ກູຈ່າຍ
ເຂົາບໍ່ໃຫ້ທຸກ ຄືພໍ່ປູ່ຮ້າງມຶງຫັ້ນເດ໊ ກູຊິບອກໃຫ້.

*ບົວແດງ :* ຮື ມີເງິນ ! ມີເງິນຫັ້ນແຫຼະ. ທຸກມື້ນີ້ນະ ເຈົ້າເຮັດຄືບ້ານຄືເມືອງເຂົາແດ່ບໍ່? ບ້ານໃຕ້ເຂົາກະຊ່າ ບ້ານເໜືອເຂົາກະຊ່າ *(ສຽດສີແຮງໆ).*

*ແມ່ແດງ :* ອີ່ແດງ ! ມຶງເວົ້າໃສ່ໃຜດຽວນີ້ຫະ ອັນນີ້ນີ່ແມ່ມຶງໃດ ກູອອກມຶງມາ ກູລ້ຽງມຶງມາ ກູພາມຶງໃຫຍ່ ພໍ່ມຶງຕາຍປະຫຍັງໃຫ້ເປັນມູນແດ່ຫື? ກູນີ້ມີຜູ້ລ້ຽງຜູ້ລ່ຳ ກູຢາກເຮັດຫຍັງຜິດຫົວໃຜຊັ້ນເບາະ ໂຍ !
*(ແມ່ບົວແດງໂມໂຫສຸດຂີດ)*

*ບົວແດງ :* *(ຮ້ອງໃສ່ແຮງໆດ້ວຍຄວາມຄຽດ)*
ມັນບໍ່ຜິດໃຜດອກ ແຕ່ມັນກະບໍ່ຄືບ້ານຄືເມືອງເພິ່ນ ເບິ່ງຜົມເຈົ້າກໍໄປດັດຫຽ່ງນໆມາ.

*ແມ່ແດງ :* ເຊົາ ໆ ມຶງບໍ່ຕ້ອງຢ້ານກູລື່ນເດ໊ ຜົວກູມັກໃຫ້ກູເອ້ກູງາມ ມຶງເປັນລູກ ມຶງບໍ່ມີສິດເວົ້າໃຫ້ແມ່ມຶງ ເດີ້ !

*ບົວແດງ :* ແມ່ແນວໃດ ບໍ່ຄືບ້ານຄືເມືອງເພິ່ນຈັກດີ້.
*(ບົວແດງເວົ້າແດກດັນໃສ່)*

*ແມ່ແດງ :* ໂອ໋ຍໆ... ອີ່ນີ້ ! ເອົາມັນຕາຍສາບໍ ຫື...

*(ບົວແດງແລ່ນໜີ ແມ່ຊັດໄມ້ຄານໃສ່ນຳຫຼັງ)*



24/VII
ຫ້າມຈຳໜ່າຍ

# ສາກ I

## ອີງສານ

*(ຄ່ຳມືດແລ້ວ ບົວແດງໂສກເສົ້າ ຍ່າງມານັ່ງລົງຕຽງສະແນນ ຄາວນຶ່ງຄຳໝັ້ນຈອບອອກມາຫາ ເອີ້ນຄ່ອຍໆ)*

*ຄຳໝັ້ນ :* ແດງ !

*ບົວແດງ :* ອ້າຍໝັ້ນ... ອ້າຍໝັ້ນ ພໍ່ອ້າຍຖືກ...

*ຄຳໝັ້ນ :* ອ້າຍຮູ້ແລ້ວ ແດງ !

*ບົວແດງ :* ອ້າຍເຮັດຫຍັງຢູ່ ປານນີ້ຈັ່ງມາ?

*ຄຳໝັ້ນ :* ອ້າຍໄປວຽກໃຫ້ພໍ່ໃດ໋ ເຈັບໃຈທີ່ສຸດ ພະນັກງານພື້ນຖານຂອງເຮົາ ຖືກຈັບໄປຫຼາຍຄົນປານນີ້ ອ້າຍວ່າມັນຕ້ອງມີຄົນໄປລາຍງານໃຫ້ເຂົາ ຕ້ອງແມ່ນຄົນໄທບ້ານເຮົານີ້ແຫຼະເປັນນັກສືບສອດແນມ.

*ບົວແດງ :* ອ້າຍຊິເຮັດແນວໃດ?

*ຄຳໝັ້ນ :* ໃນສະພາບແບບນີ້ນະ ອ້າຍຄຶດວ່າ ມີແຕ່ນ້ອງຄົນດຽວຊິຊ່ອຍໄດ້.

*ບົວແດງ :* ນ້ອງ - ອ້າຍເວົ້າແທ້ຫວະ?

*ຄຳໝັ້ນ :* ເວົ້າແທ້ ແດງ. ຖ້າວ່ານ້ອງພໍໃຈຊ່ອຍ ອ້າຍເຊື່ອແນ່ວ່າ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ